# ບົດປາໄສ

ຂອງ ພະນະທ່ານ ຈູມມາລີ ໄຊຍະສອນ, ປະທານປະເທດ

ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກ່າວໃນພິທີມອບກະແຈເມືອງ

ບາງກອກ, ວັນທີ 12 ພຶດສະພາ 2009

---------------------------

- ສົມເດັດ ພະບໍຣົມ ໂອຣະສາທິຣາດ ສະຫຍາມມົງກຸດ ຣາຊະກຸມານ
- ສົມເດັດ ພະເທບຣັດຊະສຸດາ ສະຫຍາມມົງກຸດ ຣາຊະກຸມາຣີ
- ມ່ອມຣາດຊະວົງ ສຸຂຸມພັນ ບໍຣິພັດ, ຜູ້ວ່າຣາດຊະການ ກຸງເທບມະຫານະຄອນ
- ພະນະທ່ານ, ທ່ານຍິງ ແລະທ່ານຊາຍ ທີ່ມີກຽດທັງຫລາຍ.

ຂ້າພະເຈົ້າ ມີຄວາມປິ້ມປິຕິຍິນດີເປັນຢ່າງຍິ່ງ ແລະຖືເປັນກຽດຢ່າງສູງ ທີ່ໄດ້ຮັບມອບກະແຈເມືອງ ເຂົ້າສູ່ກຸງເທບມະຫານະຄອນ ຈາກມ່ອມຣາດຊະວົງ ສຸຂຸມພັນ ບໍຣິພັດ, ຜູ້ວ່າຣາດຊະການ ກຸງເທບມະຫານະຄອນ ຊຶ່ງເປັນສັນຍາລັກ ອັນມີຄວາມຫມາຍຍິ່ງໃນໂອກາດການຢ້ຽມຢາມທາງລັດຖະກິດ ຢູ່ຣາຊະອານາຈັກໄທຂອງຂ້າພະເຈົ້າ ແລະພັນລະຍາໃນຖານະພະຣາດຊະອາຄັນຕຸກະໃນຄັ້ງນີ້.

ກຸງເທບມະຫານະຄອນ ເປັນເມືອງທີ່ສວຍສົດງົດງາມ ແລະຈະເລີນຮຸ່ງເຮືອງ ເມືອງຫນຶ່ງຂອງໂລກ ທັງເປັນນະຄອນຫລວງ ແຫ່ງຣາຊະອານາຈັກໄທ ທີ່ເກົ່າແກ່, ມີປະຫວັດສາດອັນຍາວນານ, ເປັນສູນລວມຂອງສິນລະປະ ວັດທະນະທຳ ແລະປູມິຍາສະຖານ ແລະມີຊື່ສຽງດົງດັງ ມາໄດ້ 227 ປີແລ້ວ. ປະຈຸບັນ, ກຸງເທບມະຫານະຄອນ ຍັງສືບຕໍ່ເປັນຈຸດສົນໃຈ ຂອງ ນັກທ່ອງທ່ຽວຈາກທົ່ວໂລກ ອັນໄດ້ສ້າງກຽດຊື່ສຽງໃຫ້ແກ່ຊາວກຸງເທບມະຫານະຄອນ ກໍຄືປະຊາຊົນໄທໃນທົ່ວປະເທດ.

ຂ້າພະເຈົ້າຫວັງຢ່າງຍິ່ງວ່າ ການຢ້ຽມຢາມຂອງຂ້າພະເຈົ້າໃນຄັ້ງນີ້ຈະເປັນການປະກອບສ່ວນເຂົ້າໃນການຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ

ລະຫວ່າງ ນະຄອນຫລວງວຽງຈັນ ແຫ່ງ ສາທາລະນາລັດ ປະຊາທິປະໄຕ ປະຊາຊົນລາວ ແລະກຸງເທບມະຫານະຄອນ ແຫ່ງຣາດຊະອານາຈັກໄທ.

ໃນການມາຢ້ຽມຢາມຄັ້ງນີ້, ຂ້າພະເຈົ້າ ແລະພັນລະຍາ ຫວັງວ່າ ຈະໄດ້ມີໂອກາດ ໄປຢ້ຽມຊົມສະຖານທີ່ຕ່າງໆ ທີ່ມີຊື່ສຽງທາງດ້ານປະຫວັດສາດ ແລະ ສິນລະປະກໍາ, ຊົມ ຄວາມສວຍສົດງົດງາມຂອງກຸງເທບມະຫານະຄອນ ແລະ ພົບປະກັບຊາວກຸງເທບມະຫາ ນະຄອນທີ່ເຕັມໄປດ້ວຍອັດທະຍາໄສໃຈຄໍອັນດີງາມໃນການຕ້ອນຮັບແຂກບ້ານແຂກເມືອງ.

ໃນໂອກາດອັນສະຫງ່າລາສີນີ້, ອີກເທື່ອຫນຶ່ງ ຂ້າພະເຈົ້າ ຂໍສະແດງຄວາມ ຂອບໃຈ ເປັນຢ່າງຍິ່ງ ຕໍ່ການຮັບມອບກະແຈເມືອງ ແລະ ຕໍ່ພິທີຕ້ອນຮັບອັນສະຫງ່າລາສີ ທີ່ມີຕໍ່ ຂ້າພະເຈົ້າ ແລະພັນລະຍາ ພ້ອມທັງຂໍສະແດງຄວາມຍິນດີ ຕໍ່ ມ່ອມຣາດຊະວົງ ສຸຂຸມພັນ ບໍຣິພັດ ທີ່ໄດ້ຮັບການເລືອກຕັ້ງໃຫ້ເປັນຜູ້ວ່າຣາດຊະການກຸງເທບມະຫານະຄອນ ໃນຫວ່າງ ບໍ່ດົນມານີ້.

ຂໍອວຍພອນ ໃຫ້ມ່ອມຣາດຊະວົງ ສຸຂຸມພັນ ບໍຣິພັດ, ຜູ້ວ່າຣາດຊະການ ກຸງເທບມະຫານະຄອນ ຈົ່ງໄດ້ຮັບຜົນສໍາເລັດໃນການປະຕິບັດຫນ້າທີ່ອັນມີກຽດຂອງທ່ານ ແລະຂໍໃຫ້ຊາວນະຄອນຫລວງວຽງຈັນ ແລະ ຊາວກຸງເທບມະຫານະຄອນ ຈົ່ງມີຄວາມຮັກ ແພງກັນ ຖານຍາດສະຫນິດ ໃກ້ຊິດຕິດພັນກັນຕະຫລອດໄປ.

ຂໍຂອບໃຈ.